# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນະຄອນຫລວງວຽງຈັນ**

ຫ້ອງວ່າການ

ເລກທີ 038 /ຫວນວ.

ວັນທີ 24 ກຸມພາ.2020

## ແຈ້ງການ

ຮຽນ: - ທ່ານຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນວ.
- ທ່ານຫົວໜ້າພະແນກການເງິນ ນະຄອນຫຼວງວຽງຈັນ.
- ທ່ານຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ນວ.
- ທ່ານເຈົ້າເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ.

ເລື່ອງ: ສະເໜີຂໍແລກປ່ຽນດິນ ແລະ ສິ່ງປຸກສ້າງຫ້ອງການຫຼັງໃໝ່ ລະຫວ່າງ ອົງການປົກຄອງບ້ານ ຈອມແຈ້ງ ແລະ ບຸກຄົນ.

- ອີງຕາມ ບົດລາຍງານຂອງເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ, ສະບັບເລກທີ 248/ຈມ.ສສນ, ລົງວັນທີ 05 ພະຈິກ 2019 ແລະ ການລາຍງານເພີ່ມເຕີມຈາກພະແນກ ຍທຂ.ນວ, ເມືອງສີສັດຕະນາກ ຄັ້ງວັນທີ 18 ກຸມພາ 2020.
- ອີງຕາມ ການຊີ້ນຳຂອງກອງປະຊຸມເຈົ້າຄອງ-ຮອງເຈົ້າຄອງ ນະຄອນຫລວງວຽງຈັນ ຮ່ວມກັບບັນດາພະແນກການ ແລະ ບັນດາເມືອງກ່ຽວຂ້ອງ, ຄັ້ງທີ 76, ຄັ້ງວັນທີ 18 ກຸມພາ 2020.

ຫ້ອງວ່າການນະຄອນຫລວງວຽງຈັນ ຂໍຖືເປັນກຽດແຈ້ງທິດຊີ້ນຳມາຍັງທ່ານຊາບ ດັ່ງນີ້:

" 1/. ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ສົມທົບກັບເມືອງ ກວດກາເບິ່ງວ່າເນື້ອທີ່ຕອນດິນທີ່ບຸກຄົນແລກປ່ຽນກັບບ້ານ ວ່າຖືກໂຄງການຕະຝັ່ງເຈື່ອນ ຫຼື ບໍ່, ຖ້າບໍ່ຖືກ ແມ່ນເຫັນດີໃຫ້ແລກປ່ຽນດິນ ແລະ ສິ່ງປຸກສ້າງຫ້ອງການບ້ານຈອມແຈ້ງຫຼັງເກົ່າ ຕາມເນື້ອທີ່ 6,5 x 20 ແມັດ=130 ຕາແມັດ ເພື່ອແລກປ່ຽນກັບຕອນດິນ ເນື້ອທີ່ 11x12 ມ = 133 ຕາແມັດ ພ້ອມທັງປຸກຫ້ອງການບ້ານຫຼັງໃໝ່ (2 ຊັ້ນ) ແລະ ປະກອບເຄື່ອງຮັບໃຊ້ຫ້ອງການໃຫ້ຄົບຊຸດ ລວມມູນຄ່າ 449.000.000 ກີບ.

2/. ມອບໃຫ້ເມືອງສີສັດຕະນາກ ຮ່າງຂໍ້ຕົກລົງວ່າດ້ວຍການແລກປ່ຽນຕອນດິນ ແລະ ການປຸກສ້າງຫ້ອງການບ້ານ, ໂດຍໃຫ້ໄປຕາມລະບຽບການ ແລະ ສາມາດກວດສອບໄດ້ "

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມທິດຊີ້ນຳຂອງກອງປະຊຸມນີ້ດ້ວຍ.

ແທນ ຫ້ອງວ່າການນະຄອນຫລວງວຽງຈັນ

ຫ້ອງວ່າການ

ບ່ອນນຳສົ່ງ:
- ເຈົ້າຄອງ-ຮອງເຈົ້າຄອງ ນວ 03 ສະບັບ
- ສຳເນົາ 02 ສະບັບ